ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ່.....118......./ ນຍ

ນະຄອນຫຼວງວຽງຈັນ, ວັນທີ .24ສິງຫາ 2004

# ດຳລັດ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການແຜນການ ແລະ ການລົງທຶນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສ.ປ.ປ. ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ການຕົກລົງຂອງລັດຖະບານ ໃນວາລະກອງປະຊຸມ ຄັ້ງວັນທີ 25 - 26 ທັນວາ 2003;
- ອີງຕາມ ການສະເໜີ ຂອງ ທ່ານປະທານ ຄະນະກຳມະການແຜນການ ແລະ ການຮ່ວມມື ສະບັບເລກທີ 584/ຄຜຮ, ລົງວັນທີ 17 ມິຖຸນາ 2004.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ I
## ທີ່ຕັ້ງ ແລະ ພາລະບົດບາດ

ມາດຕາ 1. **ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການແຜນການ ແລະ ການລົງທຶນ, ຊຶ່ງຂຽນເປັນຕົວອັກສອນຫຍໍ້ "ຄຜທ" ແມ່ນອົງການຈັດຕັ້ງຄຸ້ມຄອງມະຫາພາກ ໃນກົງຈັກຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ສູນກາງພັກ ແລະ ລັດຖະບານໃນການຄົ້ນຄວ້າ, ສັງລວມ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ແຜນພັດທະນາເສດຖະກິດ - ສັງຄົມ; ຂໍ້ມູນສະຖິຕິທາງການ; ນະໂຍບາຍ; ການດຸ່ນດ່ຽງເສດຖະກິດມະຫາພາກ; ການສົ່ງເສີມ ແລະ

ການຄຸ້ມຄອງວຽກງານລົງທຶນພາຍໃນ ແລະ ຕ່າງປະເທດ; ການຮ່ວມມືກັບ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ສາທາລະນະລັດ ປະຊາຊົນຈີນ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 2. ໜ້າທີ່ ຂອງ ຄະນະກຳມະການແຜນການ ແລະ ການລົງທຶນ**

ຄະນະກຳມະການແຜນການ ແລະ ການລົງທຶນມີໜ້າທີ່ດັ່ງນີ້:

2.1. ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃຫ້ກາຍເປັນຍຸດທະສາດພັດທະນາເສດຖະກິດ-ສັງຄົມ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ແຜນການໄລຍະກາງ, ແຜນການ ຫ້າປີ ແລະ ແຜນການປະຈຳປີ ເພື່ອສະເໜີລັດຖະບານພິຈາລະນາ;

2.2. ຄົ້ນຄວ້ານະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານແຜນການ ແລະ ການລົງທຶນຂອງລັດ, ສະຖິຕິ, ການລົງທຶນພາຍໃນ ແລະ ຕ່າງປະເທດ;

2.3. ຄົ້ນຄວ້າວິໄຈ, ຄຸ້ມຄອງ, ດຸ່ນດ່ຽງດັດສົມເສດຖະກິດມະຫາພາກ, ຄົ້ນຄວ້າກຳນົດນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານລຶບລ້າງຄວາມທຸກຍາກ ໃນຂອບເຂດທົ່ວປະເທດ ເພື່ອສະເໜີລັດຖະບານພິຈາລະນາ, ຜັນຂະຫຍາຍ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດການລຶບລ້າງຄວາມທຸກຍາກໃນທ້ອງຖິ່ນຕ່າງໆ ພາຍຫຼັງລັດຖະບານ ຫຼື ຂັ້ນເທິງທີ່ມີສິດອຳນາດຮັບຮອງເອົາແລ້ວ;

2.4. ຄຸ້ມຄອງ, ຕິດຕາມການຊ່ວຍເຫຼືອລ້າ ແລະ ກູ້ຢືມທີ່ກ່ຽວຂ້ອງກັບວຽກງານການວາງແຜນພັດທະນາເສດຖະກິດ-ສັງຄົມ ທົ່ວປະເທດ;

2.5. ຄົ້ນຄວ້າສັງລວມ, ຄຸ້ມຄອງ, ຕິດຕາມ, ປະສານສົມທົບ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດນະໂຍບາຍ ວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດຢູ່ ສ.ປ.ປ. ລາວ;

2.6. ຄົ້ນຄວ້າສະເໜີຂໍການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກ ສ.ສ. ຫວຽດນາມ ແລະ ສ.ປ. ຈີນ ຕາມການເຫັນດີຂອງ ລັດຖະບານ ແລະ ສະເໜີລັດຖະບານ ພິຈາລະນາຮັບເອົາການຊ່ວຍເຫຼືອລ້າ ຫຼື ກູ້ຢືມຈາກສອງປະເທດດັ່ງກ່າວນີ້;

2.7. ຄົ້ນຄວ້າພິຈາລະນາອະນຸມັດ ຫຼື ຖອນອະນຸມັດການລົງທຶນ ຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ;

2.8. ເປັນໃຈກາງໃນການຊີ້ນຳ, ນຳພາ, ຄຸ້ມຄອງ, ປະສານງານ ແລະ ຈັດຕັ້ງປະຕິບັດວຽກງານສະຖິຕິ ໂດຍການສຳຫຼວດເກັບກຳ, ສັງລວມ, ວິໄຈ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ, ນັບທັງການບໍລິການວິຊາການສະຖິຕິ ເພື່ອຮັບໃຊ້ສັງຄົມ;

2.9. ເກັບກຳ, ຄົ້ນຄວ້າ, ວິໄຈບັນດາຂໍ້ມູນເສດຖະກິດ - ສັງຄົມ, ສັງລວມ ແລະສ້າງເປັນເອກະສານ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ລັດຖະບານໃນແຕ່ລະດ້ານ;

2.10. ປະສານສົມທົບກັບກະຊວງການເງິນ ໃນວຽກງານຈັດແບ່ງງົບປະມານການລົງທຶນຂອງລັດ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ລວມທັງທຶນສົມທົບຂອງລັດກັບໂຄງການຮ່ວມມືກັບຕ່າງປະເທດ ເພື່ອສະເໜີລັດຖະບານພິຈາລະນາ;

2.11. ເປັນໃຈກາງ ໃນການສະຫຼຸບສັງລວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ເພື່ອສະເໜີໃຫ້ລັດຖະບານພິຈາລະນາ ແລະ ຮັບຮອງ;

2.12. ຕິດຕາມ, ກວດກາ, ແນະນຳ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ, ໂຄງການລົງທຶນຂອງລັດ, ໂຄງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ;

2.13. ຈັດຕັ້ງຝຶກອົບຮົມດ້ານວິຊາການກ່ຽວກັບວຽກງານເສດຖະກິດແຜນການ, ການຕິດຕາມປະເມີນຜົນ, ສະຖິຕິ ແລະການລົງທຶນໃນຂອບເຂດທົ່ວປະເທດ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດໃນການປະຕິບັດໜ້າທີ່ວຽກງານ;

2.14. ຊີ້ນຳດ້ານວິຊາການກ່ຽວກັບວຽກງານແຜນການ, ການປະເມີນຜົນໂຄງການລົງທຶນ, ສະຖິຕິ, ການລົງທຶນ ພາຍໃນ ແລະ ການລົງທຶນຮ່ວມກັບຕ່າງປະເທດໃຫ້ແກ່ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

2.15. ສຶກສາອົບຮົມການເມືອງແນວຄິດ, ປັບປຸງບູລະນະກົງຈັກການຈັດຕັ້ງ ແລະ ກໍ່ສ້າງ, ບຳລຸງຍົກລະດັບວິຊາສະເພາະໃຫ້ພະນັກງານລັດຖະກອນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

2.16. ຂຶ້ນແຜນງົບປະມານ ການເຄື່ອນໄຫວສຳລັບຂະແໜງການຂອງຕົນ ແລະ ຈັດຕັ້ງຄຸ້ມຄອງ, ນຳໃຊ້ງົບປະມານ, ຊັບສົມບັດຂອງລັດ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ຕາມລະບຽບການກຳນົດ.

**ມາດຕາ 3. ຂອບເຂດສິດຂອງ ຄະນະກຳມະການແຜນການ ແລະ ການລົງທຶນ**

ຄະນະກຳມະການແຜນການ ແລະ ການລົງທຶນມີຂອບເຂດສິດດັ່ງນີ້:

3.1. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດຂອງຂະແໜງການແຜນການ ແລະ ວຽກງານການລົງທຶນ;

3.2. ເລືອກເຟັ້ນ, ຈັດລຽງບູລິມະສິດ ບັນດາໂຄງການລົງທຶນຂອງລັດ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ຂະແໜງການ ແລະ ທ້ອງຖິ່ນສະເໜີມາ ເພື່ອຈັດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ. ພ້ອມກັນນັ້ນ ກໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ດັດແກ້ໂຄງການຖ້າເຫັນວ່າມີຄວາມຈຳເປັນ ເພື່ອສະເໜີລັດຖະບານພິຈາລະນາຕົກລົງ;

3.3. ເລືອກເຟັ້ນ, ຈັດລຽງບູລິມະສິດ ແລະ ສະເໜີນະໂຍບາຍກະຕຸກຊຸກຍູ້ ໂຄງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ເພື່ອຂໍອະນຸມັດຕາມຂັ້ນຕອນ ແລະ ລະບຽບການ;

3.4. ບົນພື້ນຖານຄວາມເປັນເອກະພາບກັບຂະແໜງການ ທີ່ກ່ຽວຂ້ອງ ປະທານຄະນະກຳມະການແຜນການ ແລະ ການລົງທຶນ ອະນຸມັດບັນດາໂຄງການຊ່ວຍເຫຼືອລ້າຈາກ ສ.ສ.

ຫວຽດນາມ ແລະ ສ.ປ. ຈີນ. ໃນກໍລະນີການອະນຸມັດໂຄງການຊ່ວຍເຫຼືອລ້າທີ່ບໍ່ເອກະພາບກັນນັ້ນ ໃຫ້ສະເໜີນາຍົກລັດຖະມົນຕີ ຫຼື ລັດຖະບານພິຈາລະນາຕົກລົງ. ສໍາລັບໂຄງການກູ້ຢືມຈາກຕ່າງປະເທດທັງໝົດນັ້ນ ໃຫ້ສະເໜີລັດຖະບານພິຈາລະນາອະນຸມັດ;

3.5. ດໍາເນີນການເຈລະຈາ, ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຕ່າງໆ ກັບພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ;

3.6. ພິຈາລະນາ ແລະ ແກ້ໄຂບັນດາບັນຫາທີ່ເກີດຂຶ້ນໃນເວລາປະຕິບັດໂຄງການລົງທຶນຂອງລັດ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ, ໂຄງການຮ່ວມມື ແລະ ຊ່ວຍເຫຼືອລ້າຈາກ ສ.ສ. ຫວຽດນາມ ແລະ ສ.ປ. ຈີນ, ຕາມຂັ້ນຕອນ ແລະ ລະບຽບການ ໂດຍປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;

3.7. ທວງເອົາບົດສະຫຼຸບລາຍງານ ຂໍ້ມູນຂ່າວສານ - ສະຖິຕິ ແລະ ເອກະສານທາງການຕ່າງໆ ທີ່ຈໍາເປັນຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອສັງລວມການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ;

3.8. ສັ່ງໂຈະຊົ່ວຄາວໂຄງການລົງທຶນຂອງລັດ, ໂຄງການລົງທຶນຂອງພາຍໃນ ແລະຕ່າງປະເທດທີ່ເຫັນວ່າມີການເຄື່ອນໄຫວຜິດກັບເປົ້າໝາຍ, ຂັດກັບສັນຍາ, ຂັດກັບລະບຽບກົດໝາຍ ເພື່ອສະເໜີລັດຖະບານພິຈາລະນາແກ້ໄຂຕາມຂັ້ນຕອນ ແລະ ລະບຽບການ;

3.9. ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍ, ສັບຊ້ອນໜ້າທີ່, ຄຸ້ມຄອງ, ກໍ່ສ້າງ, ນໍາໃຊ້, ຍ້ອງຍໍ, ປົດຕໍາແໜ່ງ, ປະຕິບັດວິໄນຕໍ່ພະນັກງານລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

3.10. ຕົກລົງສ້າງຕັ້ງ, ປັບປຸງ ແລະ ຍົກເລີກໜ່ວຍງານສະເພາະກິດ, ບັນດາກົງຈັກການຈັດຕັ້ງຂັ້ນພະແນກຂອງກົມ ແລະ ທຽບເທົ່າ ຂອງພະແນກແຜນການ ແລະ ການລົງທຶນຂັ້ນແຂວງ, ຫ້ອງການແຜນການ - ສັງລວມ ຂັ້ນເມືອງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 4. ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນ ຂອງ ຄະນະກໍາມະການແຜນການ ແລະ ການລົງທຶນ ມີດັ່ງນີ້:

4.1. ຄະນະກໍາມະການແຜນການ ແລະ ການລົງທຶນ ມີປະທານເປັນຫົວໜ້າ, ປະທານເປັນສະມາຊິກຂອງລັດຖະບານ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ຖືກຮັບຮອງຈາກສະພາແຫ່ງຊາດ. ປະທານ ມີຄວາມຮັບຜິດຊອບໃນການປະຕິບັດພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງຕົນຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສ.ປ.ປ. ລາວ ແລະ ຕາມດໍາລັດສະບັບນີ້ ພ້ອມທັງຮັບຜິດຊອບຕໍ່ ການເຄື່ອນໄຫວຂະແໜງແຜນການ ແລະ ການລົງທຶນໃນຂອບເຂດທົ່ວປະເທດ, ອໍານວຍຄວາມສະດວກ, ຄວບຄຸມການຈັດຕັ້ງປະຕິບັດແນວທາງ

ນະໂຍບາຍຂອງພັກ ແລະ ລັດຖະບານ, ປະທານ ມີສິດມອບຄວາມຮັບຜິດຊອບຊົ່ວຄາວ ໃຫ້ຮອງປະທານເປັນຜູ້ຮັກສາການແທນ ໃນເວລາຕິດຂັດ ຫຼື ໄປວຽກທາງໄກ;

4.2. ຄະນະກຳມະການແຜນການ ແລະ ການລົງທຶນ ປະກອບມີ ຮອງປະທານຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ, ຮອງປະທານເປັນຜູ້ຊ່ວຍວຽກປະທານ ແລະ ລົງເລິກຮັບຜິດຊອບກຸ່ມວຽກໃດໜຶ່ງ ຕາມການມອບໝາຍຂອງປະທານ;

4.3. ຄະນະກຳມະການແຜນການ ແລະ ການລົງທຶນປະກອບມີຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສູນ ແລະ ຫົວໜ້າສະຖາບັນ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານຄວາມເປັນເອກະພາບກັບປະທານ ຄຜທ; ມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສູນ, ຮອງຫົວໜ້າສະຖາບັນ ແລະ ຫົວໜ້າ, ຮອງຫົວໜ້າພະແນກສັງກັດກົມ, ຫົວໜ້າ, ຮອງຫົວໜ້າພະແນກ ປະຈຳອົງການປົກຄອງຂັ້ນແຂວງ ແລະ ຫົວໜ້າຫ້ອງການປະຈຳອົງການປົກຄອງຂັ້ນເມືອງ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກປະທານ ຄະນະກຳມະການແຜນການ ແລະ ການລົງທຶນ ຕາມການສະເໜີຂອງ ກົມຈັດຕັ້ງ ແລະ ພະນັກງານ ແລະ ບົນພື້ນຖານຄວາມເປັນເອກະພາບກັບຄະນະຈັດຕັ້ງສູນກາງພັກ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ. ນອກນີ້, ຄະນະກຳມະການ ແຜນການ ແລະ ການລົງທຶນ ປະກອບດ້ວຍພະນັກງານວິຊາການ, ພະນັກງານບໍລິຫານຮັບໃຊ້ທົ່ວໄປຈຳນວນໜຶ່ງ ເພື່ອປະກອບເຂົ້າຕຳແໜ່ງງານຕ່າງໆ ຕາມຄວາມເໝາະສົມ.

**ມາດຕາ 5. ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງ ຄະນະກຳມະການແຜນການ ແລະ ການລົງທຶນ ມີດັ່ງນີ້:

5.1 ຂັ້ນສູນກາງປະກອບດ້ວຍ:

- ຫ້ອງການ ຄະນະກຳມະການແຜນການ ແລະ ການລົງທຶນ;
- ກົມຈັດຕັ້ງ ແລະ ພະນັກງານ;
- ກົມແຜນການສັງລວມ;
- ກົມຕິດຕາມ ແລະ ປະເມີນຜົນໂຄງການລົງທຶນ;
- ກົມສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ;
- ສະຖາບັນ ຄົ້ນຄ້ວາເສດຖະກິດແຫ່ງຊາດ;
- ສູນ ສະຖິຕິແຫ່ງຊາດ;
- ຫ້ອງການ ຄະນະກຳມາທິການຮ່ວມມືລາວ-ຫວຽດນາມ;
- ຫ້ອງການ ຄະນະກຳມາທິການຮ່ວມມືລາວ-ຈີນ.

ຢູ່ພາຍໃນກົມ ແລະ ທຽບເທົ່າກົມອະນຸຍາດໃຫ້ມີພະແນກການ, ໂຄງການ ແລະ ໜ່ວຍງານວິຊາສະເພາະ ຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງວຽກງານ.

5.2 ຂັ້ນທ້ອງຖິ່ນປະກອບດ້ວຍ:

- ພະແນກແຜນການ ແລະ ການລົງທຶນ ປະຈຳອົງການປົກຄອງຂັ້ນແຂວງ;
- ຫ້ອງການແຜນການ - ສັງລວມ ປະຈຳອົງການປົກຄອງຂັ້ນເມືອງ.

**ມາດຕາ 6. ການກຳນົດພາລະບົດບາດ ແລະ ໜ້າທີ່ຂອງໂຄງປະກອບກົງຈັກ**

ມອບໃຫ້ປະທານ ຄະນະກຳມະການແຜນການ ແລະ ການລົງທຶນ ເປັນຜູ້ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ, ຕຳແໜ່ງງານ ແລະ ໂຄງປະກອບກົງຈັກ ຂອງບັນດາຫ້ອງການ, ບັນດາກົມ, ສູນ, ສະຖາບັນ, ພະແນກແຜນການ ແລະ ການລົງທຶນປະຈຳອົງການປົກຄອງຂັ້ນແຂວງ ແລະ ຫ້ອງການແຜນການ - ສັງລວມປະຈຳອົງການປົກຄອງຂັ້ນເມືອງ ໃນທົ່ວປະເທດ ບົນພື້ນຖານຄວາມເປັນເອກະພາບກັບ ສຳນັກງານນາຍົກລັດຖະມົນຕີ.

**ມາດຕາ 7. ຫຼັກການຄຸ້ມຄອງຕາມຂະແໜງການ**

ຄະນະກຳມະການແຜນການ ແລະ ການລົງທຶນ ຄຸ້ມຄອງຂະແໜງແຜນການ ແລະ ການລົງທຶນຕາມສາຍຕັ້ງຂອງຕົນ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ບົນພື້ນຖານລະບຽບກົດໝາຍ ແລະ ຕາມທິດນຳ ແລະ ຫຼັກການທີ່ມະຕິ 21/ກມສພ, ລົງວັນທີ 08 ພຶດສະພາ 1993 ກຳນົດ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 8. ຫຼັກການລວມ**

ຄະນະກຳມະການແຜນການ ແລະ ການລົງທຶນ ເຮັດວຽກຕາມຫຼັກການລຸ່ມນີ້:

8.1 ການເຄື່ອນໄຫວ ແລະ ດຳເນີນງານຂອງ ຄະນະກຳມະການແຜນການ ແລະ ການລົງທຶນ ຕ້ອງຍຶດໝັ້ນຍຸດທະສາດ ແລະ ແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ.

8.2 ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວຢ່າງເຂັ້ມງວດ ແລະ ມີການແບ່ງງານກັນຢ່າງຈະແຈ້ງ, ການມອບສິດ ແລະ ມອບຄວາມຮັບຜິດຊອບຕ້ອງເປັນລາຍລັກອັກສອນ.

8.3 ເຮັດວຽກຢ່າງມີແຜນການ, ມີກຳນົດເວລາ, ຕາມສາຍການຈັດຕັ້ງ, ມີການປະສົມປະສານ ແລະ ມີການຕິດຕາມກວດກາເປັນປົກກະຕິ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດແນວທາງນະໂຍບາຍລວມຂອງພັກ ແລະ ບັນດາລະບຽບກົດໝາຍຕ່າງໆ ຂອງລັດຖະບານ ໃຫ້ໄດ້ຮັບຜົນເປັນຢ່າງດີ, ຊອກວິທີການແກ້ໄຂຢ່າງທັນການຕໍ່ບັນຫາຕ່າງໆ ທີ່ເກີດຂຶ້ນ.

8.4 ຕ້ອງປະຕິບັດລະບອບຮ່ວມປະຊຸມ, ສ່ອງແສງ, ລາຍງານ, ກວດກາຢ່າງເຂັ້ມງວດເປັນຕົ້ນແມ່ນກອງປະຊຸມປະຈຳອາທິດ, ກອງປະຊຸມສະຫຼຸບປະຈຳເດືອນ, 03ເດືອນ, 06ເດືອນ, ປະຈຳປີ ແລະ ກອງປະຊຸມວິສາມັນຕ່າງໆ ເພື່ອກຳສະພາບການຮອບດ້ານ ຈາກແຕ່ລະພາກສ່ວນ ແລ້ວສັງລວມລາຍງານໃຫ້ລັດຖະບານຊາບ.

# ໝວດທີ V
# ບົດບັນຍັດສຸດທ້າຍ

**ມາດຕາ 9. ຕາປະທັບ ແລະ ງົບປະມານ**

ຄະນະກຳມະການແຜນການ ແລະ ການລົງທຶນ, ບັນດາກົມ ແລະ ທຽບເທົ່າກົມ, ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ຫ້ອງການແຜນການ-ສັງລວມ ຂັ້ນເມືອງ ອະນຸຍາດໃຫ້ມີຕາປະທັບ ແລະ ງົບປະມານ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ຄະນະກຳມະການແຜນການ ແລະ ການລົງທຶນ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງ, ຂັ້ນເມືອງ ແລະ ທຸກພາກສ່ວນ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 150/ນຍ, ລົງວັນທີ 16 ມິຖຸນາ 2001.

**ນາຍົກລັດຖະມົນຕີແຫ່ງ ສ.ປ.ປ. ລາວ**

ບຸນຍັງ ວໍລະຈິດ